(ບົດແປບໍ່ເປັນທາງການ)

**ປະກາດກະຊວງພານິດ**

**ເລື່ອງ: ກຳນົດໃຫ້ໄມ້ທ່ອນ ໄມ້ແປຮູບ ແລະ ຜະລິດຕະພັນໄມ້ປະດົ່ງ ແລະ ໄມ້ຄຳພີ**

**ແລະ ຜະລິດຕະພັນໄມ້ຂະຍູງ ເປັນສິນຄ້າທີ່ຫ້າມນຳຜ່ານຣາຊະອານາຈັກໄທ**

**ພ.ສ 2559**

---

ເນື່ອງຈາກຄວາມຈຳເປັນເພື່ອຄຸ້ມຄອງ ແລະ ຮັກສາຊັບພະຍາກອນທຳມະຊາດ ເຫັນດີກຳນົດໃຫ້ໄມ້ທ່ອນ, ໄມ້ແປຮູບ ແລະ ຜະລິດຕະພັນໄມ້ປະດົ່ງ, ໄມ້ຄຳພີ ແລະ ຜະລິດຕະພັນໄມ້ຂະຍູງ ເປັນສິນຄ້າທີ່ຕ້ອງຫ້າມນຳຜ່ານຣາຊະອານາຈັກໄທ.

ອີງໃສ່ມາດຕາ 5/1 ຂອງພະຣາຊະບັນຍັດການສົ່ງອອກໄປນອກ ແລະ ການນຳເຂົ້າມາໃນຣາຊະອານາຈັກຊຶ່ງສິນຄ້າ ພ.ສ. 2522 ຊຶ່ງແກ້ໄຂເພີ່ມເຕີມໂດຍພະຣາຊະບັນຍັດການສົ່ງອອກໄປນອກ ແລະ ການນຳເຂົ້າມາໃນຣາຊະອານາຈັກຊຶ່ງສິນຄ້າ (ສະບັບທີ 2) ພ.ສ. 2558 ລັດຖະມົນຕີວ່າການກະຊວງພານິດ ໂດຍອະນຸມັດຂອງ ຄະນະລັດຖະມົນຕີ ອອກປະກາດໄວ້ ດັ່ງຕໍ່ໄປນີ້

ຂໍ້ 1 ປະກາດນີ້ເອີ້ນວ່າ "ປະກາດກະຊວງພານິດ ເລື່ອງ ກຳນົດໃຫ້ໄມ້ທ່ອນ ໄມ້ແປຮູບ ແລະ ຜະລິດຕະພັນໄມ້ປະດົ່ງ ໄມ້ຄຳພີ ແລະ ຜະລິດຕະພັນໄມ້ຂະຍູງ ເປັນສິນຄ້າທີ່ຫ້າມນຳຜ່ານຣາຊະອານາຈັກ ພ.ສ. 2559"

ຂໍ້ 2 ປະກາດນີ້ໃຫ້ໃຊ້ບັງຄັບຕັ້ງແຕ່ວັນຖັດຈາກວັນປະກາດລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ

ຂໍ້ 3 ໃນປະກາດນີ້

"ຜະລິດຕະພັນ" ໝາຍຄວາມວ່າ ຕູ້, ໂຕະ, ຕຽງ, ຕັ່ງ, ປະຕູ, ປ່ອງຢ້ຽມ, ໄມ້ວົງກົບ, ໄມ້ຄື້ວ ແລະ ໄມ້ບົວ ທີ່ເຮັດຈາກໄມ້ ແລະ ໃຫ້ໝາຍຄວາມລວມທັງໄມ້ປະສານ ໄມ້ປາເກ້ ໄມ້ປູພື້ນມີລິ້ນຮ່ອງ ແລະ ໄມ້ໂມເສກ

ຂໍ້ 4 ໃຫ້ຖືເອົາໄມ້ທ່ອນ ໄມ້ແປຮູບ ແລະ ຜະລິດຕະພັນໄມ້ປະດົ່ງ ແລະ ໄມ້ຄຳພີ ແລະ ຜະລິດຕະພັນໄມ້ຂະຍູງ ຕາມບັນຊີທ້າຍໃນປະກາດນີ້ ເປັນສິນຄ້າທີ່ຕ້ອງຫ້າມນຳຜ່ານຣາຊະອານາຈັກໄທ

ລົງວັນທີ 27 ຕຸລາ ພ.ສ. 2559

(ເຊັນ)

ນາງ ອະພິຣະດີ ຕັນຕຣາພອນ

ລັດຖະມົນຕີ ວ່າການ ກະຊວງພານິດ

ໝາຍເຫດ: ປະກາດໃນຈົດໝາຍເຫດທາງລັດຖະການ ສະບັບປະກາດ ແລະ ວຽກທົ່ວໄປ ເຫຼັ້ມ 133 ຕອນພິເສດທີ 249 ວັນທີ 1 ພະຈິກ 2559

ບັນຊີທ້າຍປະກາດກະຊວງພານິດ

ເລື່ອງ: ກຳນົດໃຫ້ໄມ້ທ່ອນ ໄມ້ແປຮູບ ແລະ ຜະລິດຕະພັນໄມ້ປະດູ່ ແລະ ໄມ້ຄຳພີ

ແລະ ຜະລິດຕະພັນໄມ້ຂະຍູງ ເປັນສິນຄ້າທີ່ຕ້ອງຫ້າມນຳຜ່ານຣາຊະອານາຈັກ ພ.ສ. 2559

| ລຳດັບ | ຊະນິດໄມ້ | ລາຍການສິນຄ້າ | ລະຫັດພາສີ |
|---|---|---|---|
| 1 | ໄມ້ປະດູ່ (Dalbergia Oliveri Gamble Exprain) | ໄມ້ທ່ອນ ໄມ້ແປຮູບ | 4403.10.10 |
| | | | 4403.10.90 |
| | | | 4403.49.10 |
| | | | 440 3.49.90 |
| | ໄມ້ຄຳພີ (Dalbergio Oliveri Gamhle Exbenth) | | 4404.20.10 |
| | | | 4404.20.90 |
| | | | 4406.10.00 |
| | | | 4406.90.00 |
| | | | 4407.29.93 |
| | | | 4407.29.99 |
| | | | 4408.39.90 |
| | | | 4409.29.00 |
| | | | 4412.31.00 |
| | | | 4418.71.00 |
| | | | 4418.72.00 |
| | | | 4418.79.00 |
| | | | 4418.90.10 |
| | | | 4418.90.90 |
| | | | 4421.90.99 |
| | | ໄມ້ປະສານ | 4421.90.99 |
| | | ໄມ້ປາເກ້ | 4409.29.00 |
| | | ໄມ້ປູພື້ນມີລິ້ນຮ່ອງ | 4409.29.00 |
| | | ໄມ້ໂມເສກ | 4418.71.00 |

| ລຳດັບ | ຊະນິດໄມ້ | ລາຍການສິນຄ້າ | ລະຫັດພາສີ |
|---|---|---|---|
| | | ຕູ້ | 9403.30.00 |
| | | | 9403.40.00 |
| | | | 9403.50.00 |
| | | | 9403.60.10 |
| | | | 9403.60.90 |
| | | ໂຕະ | 9403.30.00 |
| | | | 9403.40.00 |
| | | | 9403.50.00 |
| | | | 9403.60.90 |
| | | | 9504.20.20 |
| | | | 9504.90.31 |
| | | | 9504.90.92 |
| | | | 9506.40.10 |
| | | ຕຽງ | 9403.50.00 |
| | | | 9403.60.90 |
| | | ຕັ່ງ | 9401.30.00 |
| | | | 9401.40.00 |
| | | | 9401.61.00 |
| | | | 9401.69.00 |
| | | | 9401.80.00 |
| | | | 9402.10.30 |
| | | | 9402.10.90 |
| | | ບານປະຕູ | 4418.20.00 |
| | | ບານປ່ອງຢ້ຽມ | 4418.10.00 |

| ລຳດັບ | ຊະນິດໄມ້ | ລາຍການສິນຄ້າ | ລະຫັດພາສີ |
|---|---|---|---|
| | | ໄມ້ວົງກົບ | 4418.10.00 |
| | | | 4418.20.00 |
| | | ໄມ້ຄິ້ວ | 4409.29.00 |
| | | ໄມ້ບົວ | 4409.29.00 |
| 2 | ໄມ້ຂະຍູງ (Dalbergia cochinchinensis Pierre) | ໄມ້ປະສານ | 4421.90.99 |
| | | ໄມ້ປາເກ້ | 4409.29.00 |
| | | ໄມ້ປູພື້ນມີລີ້ນຮ່ອງ | 4409.29.00 |
| | | ໄມ້ໂມເສກ | 4418.71.00 |
| | | ຕູ້ | 9403.30.00 |
| | | | 9403.40.00 |
| | | | 9403.50.00 |
| | | | 9403.60.10 |
| | | | 9403.60.90 |
| | | ໂຕະ | 9403.30.00 |
| | | | 9403.40.00 |
| | | | 9403.50.00 |
| | | | 9403.60.90 |
| | | | 9504.20.20 |
| | | | 9504.90.31 |
| | | | 9504.90.92 |
| | | | 9506.40.10 |
| | | ຕຽງ | 9403.50.00 |
| | | | 9403.60.90 |

| ລຳດັບ | ຊະນິດໄມ້ | ລາຍການສິນຄ້າ | ລະຫັດພາສີ |
|---|---|---|---|
| | | ຕັ່ງ | 9401.30.00<br>9401.40.00<br>9401.61.00<br>9401.69.00<br>9401.80.00<br>9402.10.30<br>9402.10.90 |
| | | ປະຕູ | 4418.20.00 |
| | | ປ່ອງຢ້ຽມ | 4418.10.00 |
| | | ໄມ້ວົງກົບ | 4418.10.00<br>4418.20.00 |
| | | ໄມ້ຄິ້ວ | 4409.29.00 |
| | | ໄມ້ບົວ | 4409.29.00 |

ໃນນີ້ ໄມ້ປະສານ ໄມ້ປາເກ້ ໄມ້ປູພື້ນມີລີ້ນຮ່ອງ ແລະ ໄມ້ໂມເສກ ທີ່ຖືວ່າເປັນຜະລິດຕະພັນຕາມປະກາດນີ້ ຕ້ອງມີຂະໜາດຕາມໜັງສືກົມປ່າໄມ້ ທີ່ ກສ 0704(2)/ວ 31273 ລົງວັນທີ 15 ພຶດສະພາ ດັ່ງນີ້:

1. ໄມ້ປະສານທີ່ໃຊ້ໄມ້ແຕ່ລະທ່ອນ ທີ່ມີຂະໜາດຄວາມກວ້າງບໍ່ເກີນ 100 ມມ (5ນີ້ວ) ຄວາມໜາບໍ່ເກີນ 37.5 ມມ (1.5 ນີ້ວ) ຄວາມຍາວບໍ່ຈຳກັດ ມາອັດປະສານດ້ວຍກາວ ຫຼື ສານເຄມີ ສັງເຄາະເຂົ້າເປັນໄມ້ແຜ່ນດຽວກັນ ຫຼື ສ່ວນດຽວກັນ ໃຫ້ຖືເປັນຜະລິດຕະພັນໄມ້ສຳເລັດຮູບ ແຕ່ຖ້າໃຊ້ໄມ້ແຕ່ລະສ່ວນທີ່ມີຂະໜາດຄວາມກວ້າງ ຄວາມໜາເກີນຂະໜາດທີ່ກຳນົດ ບໍ່ວ່າຈະມີຂະໜາດຄວາມຍາວເທົ່າໃດມາອັດ ຫຼື ປະສານ ກໍໃຫ້ຖືເປັນໄມ້ແປຮູບທັງໝົດ.
2. ໄມ້ປາເກ້ ໄມ້ປູພື້ນມີລີ້ນຮ່ອງ ທີ່ມີຄວາມກວ້າງບໍ່ເກີນ 100 ມມ (4ນີ້ວ) ຄວາມໜາບໍ່ເກີນ 22 ມມ (7/8 ນີ້ວ) ໃຫ້ຖືເປັນຜະລິດຕະພັນໄມ້ ແຕ່ຖ້າໄມ້ມີຂະໜາດຄວາມກວ້າງ ຄວາມຍາວ ເກີນກວ່າທີ່ກຳນົດນີ້ ໃຫ້ຖືເປັນໄມ້ແປຮູບ.
3. ໄມ້ໂມເສກ ແມ່ນ ໄມ້ຕ່ອນນ້ອຍໆ ທີ່ໄດ້ຜ່ານຂະບວນການ ອົບ ເລື່ອຍ ຊອຍ ແລ້ວນຳມາລຽງທາກາວ ແລ້ວອັດເປັນແຜ່ນຂະໜາດກວ້າງ 30 ຊມ, ຄວາມຍາວ 30 ຊມ. (30x30 ຊມ) ຫຼື ນຳມາຈັດລຽງ ແລ້ວໃຊ້ເຈ້ຍ ຫຼື ຜ້າທາກາວຍຶດໄມ້ ໃຫ້ເປັນແຜ່ນມີຂະໜາດຄວາມກວ້າງ, ຄວາມໜາ, ຄວາມຍາວ ຕາມມາດຕະຖານສາກົນທົ່ວໄປ ເຊິ່ງໄດ້ຜ່ານຂັ້ນຕອນຕ່າງໆມາພໍສົມຄວນ ຈົນບໍ່ສາມາດນຳໄປໃຊ້ປະໂຫຍດຢ່າງອື່ນໄດ້ ຫຼື ຖ້າຈະນຳໄປໃຊ້ປະໂຫຍດຢ່າງອື່ນກໍໄດ້ແຕ່ບໍ່ມີຄຸ້ມຄ່າ ກໍຖືວ່າໄມ້ທີ່ນຳມາປະກົບເປັນແຜ່ນໂມເສກນັ້ນ ເປັນຜະລິດຕະພັນໄມ້.